


## ການເຄື່ອນໄຫວສ້າງຂະບວນການສາມອົງການຈັດຕັ້ງຂອງ ທຫລ.ສຂຮ່ວມກັບໂຮງຮຽນປະຖົມບ້ານສະຄຶນ





ໃນຕອນເຊົ້າຂອງວັນທີ 21 ເມສາ 2017 ຄະນະຮັບຜິດຊອບຂະບວນການສາມອົງການຈັດຕັ້ງມະຫາຊົນ ພ້ອມສະມາຊິກຕົວແທນສາມອົງການຈັດຕັ້ງ ສາຂາທຫລ ພາກກາງ ໄດ້ເດີນທາງໄປຮ່ວມສ້າງກິດຈະກຳມອບເຄື່ອງຊ່ວຍເຫລືອປະເພດເຄື່ອງອຸປະກອນການສຶກສາ , ອຸປະກອນກິລາ ແລະ ເສື້ອຂາວນັກຮຽນແຕ່ຊັ້ນປະຖົມປີທີ1 - ຊັ້ນປະຖົມປີທີ5 ໃຫ້ກັບນ້ອງນ້ອຍນັກຮຽນປະຖົມສົມບູນ ສະຄຶນ ເມືອງຈຳພອນແຂວງສະຫວັນນະເຂດ ໂດຍໃຫ້ກຽດ ເຂົ້າຮ່ວມ ທ່ານ ນ. ປອ ດ່ຽງຄຳ ແສງແກ້ວມີໄຊ ຮອງເລຂາໜ່ວຍພັກ ຮອງຫົວໜ້າສາຂາ ທຫລ ພາກກາງ ນຳພາຄະນະຮັບຜິດຊອບສ້າງຂະບວນການກັບນ້ອງນ້ອຍນັກຮຽນໃນຄັ້ງນີ້





ໂດຍຄະນະຜິດຊອບໄດ້ນຳສະເໜີພາບໂດຍລວມກ່ຽວກັບພາລະບົດບາດຂອງ ທະນາຄານແຫ່ງ ສປປ ລາວ, ປະຫວັດຄວາມເປັນຂອງເງິນກີບລາວ, ການຮັກສາໃບເງິນໂດຍສັງເຂບໃຫ້ຄູອາຈານ ແລະ ນ້ອງນ້ອຍນັກຮຽນໄດ້ຮັບຟັງ ໂດຍມີຈຳນວນຄົນເຂົ້າ ຮ່ວມທັງໝົດ 186 ຄົນ , ຄູອາຈານ 16 ທ່ານ, ນ້ອງນັກຮຽນແຕ່ປ1 - ປ5 ຈຳນວນ 170 ຄົນ ຍິງ 91 ຄົນ ພ້ອມນັ້ນ ກໍ່ໄດ້ສ້າງກິດຈະກຳຖາມ-ຕອບ ມອບຂອງຂັວນ ໃຫ້ກັບນ້ອງນ້ອຍນັກຮຽນ ກ່ຽວກັບການສົ່ງເສີມ ແລະ ການນຳໃຊ້ເງິນກີບເຊິ່ງນັກຮຽນໃຫ້ຄວາມສົນໃຈຫລາຍພໍສົມຄວນກ່ຽວກັບເນື້ອໃຈຈິດໃຈທີ່ວ່າຢູ່ເມືອງລາວໃຊ້ແຕ່ເງິນກີບ;






ການສ້າງຂະບວນການເຄື່ອນໄຫວກິດຈະກຳໃນຄັ້ງນີ້ໄດ້ດຳເນີນໄປດ້ວຍບັນຍາການອັນເບີກບານມ່ວນຊ່ວນ ເຊິ່ງສຳພັດ ໄດ້ຈາກນ້ອງນ້ອຍນັກຮຽນ, ຄູອາຈານ, ອຳນາດການປົກຄອງບ້ານ ແລະ ຄະນະຫ້ອງການສຶກສາເມືອງທີ່ສະແດງຄວາມຮູ້ບຸນຄຸນຂອບອົກຂອບໃຈ ດີໃຈເປັນຢ່າງຍິ່ງແບບບໍ່ເຄີຍມີມາກ່ອນທີ່ສາຂາ ທະນາຄານແຫ່ງ ສປປ ລາວ ພາກກາງແຂວງສະຫວັນນະເຂດ ລົງມາສ້າງກິດຈະກຳ ແລະ ມອບເຄື່ອງຊ່ວຍເຫລືອໃຫ້ແກ່ ໂຮງຮຽນປະຖົມສະຄື່ນ ໃນ ຄັ້ງນີ້ລວມມູນຄ່າທັງໝົດ 5.000.000 ກີບ ຊຶ່ງປະກອບມີ: ອຸປະກອນການສຶກສາ, ອຸປະກອນກິລາ, ອາຫານທ່ຽງໃຫ້ນ້ອງນັກຮຽນ



ການເຄື່ອນໄຫວສ້າງຂະບວນການກິດຈະກຳຄັ້ງນີ້ໄດ້ສຳເລັດລົງ ໃນເວລາ 11ໂມງ 30 ນາທີ, ຕອນທ້າຍຍັງໄດ້ຮັບຊົມສິນລະປະຈາກ ນ້ອງ ນ້ອຍນັກຮຽນປະຖົມສະຄືນດ້ວຍບັນຍາກາດອັນເບີກບານມ່ວນຊື່ນປະສົມກັບຄວາມດີອົກດີໃຈ ແລະ ໄມຕີຈິດຂອງ ນ້ອງນັກຮຽນປະຖົມສະຄືນທີ່ມອບ ໃຫ້ເອື້ອຍອ້າຍນ້ອງກໍ່ຄືຄະນະຮັບຜິດຊອບຂະບວນການສາມອົງການຈັດຕັ້ງມະຫາຊົນ ສາຂາ ທະນາຄານແຫ່ງ ສປປ ລາວພາກກາງ ແຂວງສະຫວັນນະເຂດ.

**ພາບ-ຂ່າວ: ໄຊຍະສັກ ສີຫາພົມ**


ທະນາຄານແຫ່ງ ສປປ ລາວ ແຂວງສະຫວັນນະເຂດ